**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງການເງິນ

ກົມປະເມີນຜົນ ແລະ ການຈັດຊື້-ຈັດຈ້າງ

ເລກທີ 1261/ກປຈ

ນະຄອນຫຼວງວຽງຈັນ, ວັນທີ 15 ກັນຍາ ໒໐໒໖

## ໜັງສືແຈ້ງເຊີນປະມູນ

1. ກົມປະເມີນຜົນ ແລະ ການຈັດຊື້-ຈັດຈ້າງ ກະຊວງການເງິນ ໃນນາມຕາງໜ້າຄະນະຮັບຜິດຊອບຈັດຊື້ພາຫະນະ ປະເພດລົດໃຫຍ່ ຈຳນວນ 22 ຄັນ. ຂໍເຊີນບັນດາບໍລິສັດທີ່ມີຄຸນນະວຸດທິເໝາະສົມ ສົນໃຈເຂົ້າຍື່ນຊອງປະມູນ ສຳລັບການສະໜອງພາຫະນະເປັນປະເພດ ລົດຈີບ ເກຍໂອໂຕ ຈຳນວນ 05 ຄັນ, ລົດຕູ້ ເກຍໂອໂຕ ຈຳນວນ 01 ຄັນ, ລົດກະບະ (ນ້ຳມັນ) ເກຍໂອໂຕ ຈຳນວນ 13 ຄັນ ແລະ ລົດກະບະໄຟຟ້າ (100%) ຈຳນວນ 03 ຄັນ. ເພື່ອປະກອບເປັນລົດຮັບໃຊ້ວິຊາສະເພາະຂອງ ກົມສ່ວຍສາອາກອນ ແລະ ຄັງເງິນແຫ່ງລັດ ກະຊວງການເງິນ. ກຳນົດເວລາໃນການມອບ-ຮັບລົດແມ່ນພາຍໃນ 45 ວັນ;
2. ການປະມູນຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງທີ່ໄດ້ກຳນົດໄວ້ຢູ່ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບ ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນໃນຄັ້ງນີ້ ອະນຸຍາດໃຫ້ທຸກໆບໍລິສັດທີ່ມີຄຸນນະວຸດທິເໝາະສົມສົນໃຈເຂົ້າຮ່ວມແຂ່ງຂັນການປະມູນ. ສາມາດຕິດຕໍ່ພົວພັນເອກະສານປະມູນໄດ້ທີ່ ກົມປະເມີນຜົນ ແລະ ການຈັດຊື້-ຈັດຈ້າງ ກະຊວງການເງິນ ຊັ້ນ 4 (ຕຶກແຄມຂອງ) ເບີໂທຕິດຕໍ່ 020 55424565, 020 28999891, 020 22042440 ໃນເວລາລັດຖະການ;
4. ເອກະສານປະມູນເລີ່ມຂາຍແຕ່ວັນທີ 15 ກັນຍາ 2026 ຫາ 20 ຕຸລາ 2026. ໃນລາຄາ 800,000 ກີບ/ຄັນ ວິທີການຊຳລະເປັນເງິນສົດ, ຈຳນວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ ແລະ ຈະໄດ້ນຳໃຊ້ເຂົ້າໃນວຽກງານປະມູນ;
5. ຊອງປະມູນຕ້ອງສົ່ງກ່ອນເວລາ 09:00 ໂມງ ຂອງວັນທີ 20 ຕຸລາ 2026. ຊອງປະມູນທຸກໆຊອງຈະໄດ້ເປີດໃນວັນທີ 20 ຕຸລາ 2026 ເວລາ 09:00 ໂມງ ທີ່ຫ້ອງປະຊຸມ ກະຊວງການເງິນ ຊັ້ນ 01 (ຕຶກແຄມຂອງ) ໂດຍຊ່ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຜູ້ປະມູນທີ່ສົນໃຈເຂົ້າຮ່ວມ. ຫາກຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ຮັບເອົາ ແລະ ສົ່ງຄືນໂດຍບໍ່ມີການເປີດ.
6. ທຸກຊອງປະມູນຕ້ອງມີການຄ້ຳປະກັນດ້ວຍ ແຊັກ (ວິຊ່າ) ຫຼື ໜັງສືຄ້ຳປະກັນອອກໂດຍທະນາຄານ, ຊຶ່ງມີມູນຄ່າຂອງການຄ້ຳປະກັນບໍ່ໃຫ້ຫຼຸດ 2% ຂອງມູນຄ່າທີ່ສະເໜີປະມູນ.

ດັ່ງນັ້ນ, ຈຶ່ງແຈ້ງເຊີນມາຍັງທ່ານເຂົ້າຮ່ວມປະມູນການຈັດຊື້ດັ່ງກ່າວຕາມທາງຄວນດ້ວຍ.

**ຫົວໜ້າກົມ**

**(ຕາງໜ້າຄະນະຮັບຜິດຊອບ)**

ກະຊວງການເງິນ
ກົມປະເມີນຜົນ ແລະ ການຈັດຊື້-ຈັດຈ້າງ

ອຸຕະແກ້ວ ແກ້ວດວງສິນ